## ຄະນະຜູ້ແທນ ສປປ ລາວ ສຳເລັດເຂົ້າຮ່ວມກອງປະຊຸມຄັ້ງທີ່ 8 ຂອງລັດພາຄີສົນທິສັນຍາເກືອດຫ້າມລະເບີດລູກຫວ່ານ

ໃນລະຫວ່າງວັນທີ 3-5 ກັນຍາ 2018 ທີ່ ຫ້ອງການອົງການສະຫະປະຊາຊາດ ທີ່ ນະຄອນເຊີແນວ, ປະເທດສະວິດເຊີແລນ, ໄດ້ຈັດກອງປະຊຸມຄັ້ງທີ່ 8 ຂອງລັດພາຄີຕໍ່ສົນທິສັນຍາເກືອດຫ້າມລະເບີດລູກຫວ່ານ ໂດຍພາຍໃຕ້ການເປັນປະທານຂອງ ປະເທດ ນິກາລາກົວ ເຊິ່ງມີຜູ້ຕາງໜ້າຈາກບັນດາປະເທດລັດພາຄີ, ປະເທດທີ່ໄດ້ລົງນາມ ໃນສົນທິສັນຍາ, ປະເທດສັງເກດການ, ບັນດາອົງການເຄືອຂ່າຍ ສປຊ ແລະ ອົງຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເຂົ້າຮ່ວມຫຼາຍກວ່າ 100 ຄະນະ. ປີ 2018 ນີ້ຍັງແມ່ນຄົບຮອບ 10 ປີ ຂອງສົນທິສັນຍາສາກົນວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ພາຍຫລັງທີ່ສົນຍາດັ່ງກ່າວໄດ້ຖືກສ້າງຕັ້ງຂຶ້ນ ແລະ ມີການລົງນາມໃນປີ 2008.

ຄະນະຜູ້ແທນຂອງ ສປປ ລາວ ທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ນຳໂດຍ ທ່ານຫົວໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ແລະ ຄະນະປະກອບດ້ວຍ ທ່ານຮອງຫົວໜ້າຫ້ອງການຄະນະກຳມະການແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ (ຄຊກລ), ຫົວໜ້າພະແນກຮ່ວມມືສາກົນ, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ແລະ ສຳນັກງານຜູ້ຕາງໜ້າຖາວອນແຫ່ງ ສປປ ລາວ ປະຈຳຫ້ອງການອົງການ ສປຊ ແລະ ອົງການຈັດຕັ້ງສາກົນອື່ນໆ ທີ່ເຊີແນວ. ຄະນະຜູ້ແທນ ສປປ ລາວ ໄດ້ປະກອບຄຳເຫັນຢ່າງຕັ້ງໜ້າ ໃນຫົວຂໍ້ຕ່າງໆຂອງກອງປະຊຸມ ທີ່ ສປປ ລາວ ຖືເປັນບູລິມະສິດສຳຄັນ ຈຳນວນ 5 ຫົວຂໍ້ໃຫຍ່ຄື (1) ການເຮັດໃຫ້ສົນທິສັນຍາດັ່ງກ່າວຖືກບັງຄັບໃຊ້ໃນລະດັບສາກົນ, (2) ການກວດກູ້-ທຳລາຍລະເບີດລູກຫວ່ານ ແລະ ໂຄສະນາສຶກສາການຫຼຸດຜ່ອນຄວາມສ່ຽງ, (3) ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, (4) ການຮ່ວມມື ແລະ ຊ່ວຍເຫຼືອຂອງສາກົນ ແລະ (5) ການຈັດຕັ້ງປະຕິບັດສົນທິສັນຍາໃນລະດັບປະເທດ. ການເຂົ້າຮ່ວມກອງປະຊຸມຄັ້ງນີ້ ແມ່ນເພື່ອສະແດງໃຫ້ເຫັນເຖິງເຈດຕະນາລົມທາງການເມືອງ ແລະ ຄວາມໝາຍໝັ້ນອັນແຮງກ້າຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວ ໃນຖານະເປັນໜຶ່ງໃນບັນດາປະເທດທີ່ຖືກຜົນກະທົບຈາກລະເບີດລູກຫວ່ານຮ້າຍແຮງກວ່າໝູ່ໃນໂລກ. ຄະນະຜູ້ແທນ ສປປ ລາວ ໄດ້ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດພັນທະຂອງຕົນ ພາຍໃຕ້ສົນທິສັນຍາດັ່ງກ່າວໃນໄລຍະໜຶ່ງປີຜ່ານມາ, ໃນຖານະເປັນປະເທດພາຄີ ໂດຍສະເພາະການສືບຕໍ່ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ທີ່ຍັງສືບຕໍ່ສ້າງຜົນກະທົບຮ້າຍແຮງຕໍ່ປະຊາຊົນ, ທັງເປັນອຸປະສັກກີດຂວາງການພັດທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ, ລວມທັງສະເໜີແຜນການໃນຕໍ່ໜ້າ ໃນການແກ້ໄຂບັນຫາລະເບີດບໍ່ທັນແຕກ. ສປປ ລາວ ຮຽກຮ້ອງໃຫ້ວົງຄະນາຍາດສາກົນເພີ່ມທະວີການຮ່ວມມື ແລະ ຊ່ວຍເຫຼືອແກ່ບັນດາປະເທດທີ່ໄດ້ຮັບຜົນກະທົບ ໃນຄວາມພະຍາຍາມດັ່ງກ່າວ, ເຊິ່ງໄດ້ຮັບຄວາມສົນໃຈ ຈາກບັນດາປະເທດລັດພາຄີ, ປະເທດຜູ້ໃຫ້ທຶນ, ປະເທດທີ່ໄດ້ຮັບຜົນກະທົບ ແລະ ອົງການຈັດຕັ້ງສາກົນຕ່າງໆ ເປັນຈຳນວນຫຼາຍ. ພ້ອມກັນນັ້ນກໍ່ໄດ້ຮຽກຮ້ອງໃຫ້ບັນດາປະເທດລົງນາມ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາດັ່ງກ່າວ ເພື່ອເຮັດໃຫ້ສົນທິສັນຍາດັ່ງກ່າວ ມີການນຳໃຊ້ຢ່າງທົ່ວເຖິງໃນຂອບເຂດທົ່ວໂລກ.

ລັດຖະບານ ສປປ ລາວ ໄດ້ຖືເອົາວຽກງານແກ້ໄຂຜົນກະທົບຈາກລະເບີດບໍ່ທັນແຕກ ເປັນໃນບູລິມະສິດສຳຄັນແຫ່ງຊາດ ໂດຍໄດ້ກຳນົດເອົາວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ເປັນເປົ້າໝາຍເພື່ອການພັດທະນາແບບຍືນຍົງ

ແຫ່ງຊາດ ສະເພາະຂອງ ສປປ ລາວ (SDG18) ພາຍໃຕ້ຫົວຂໍ້ "ຊີວິດທີ່ປາສະຈາກລະເບີດບໍ່ທັນແຕກ". ສປປ ລາວ ຍັງຈະສືບຕໍ່ເປັນປະເທດຜູ້ປະສານງານ ໃນວຽກງານກວດກູ້ ພາຍໃຕ້ຂອບການປະຕິບັດສົນທິສັນຍາດັ່ງກ່າວ ໃນສົກປີ 2017-2019 ຮ່ວມກັບປະເທດ ເນເທີແລນ ເຊິ່ງຈະໝົດໜ້າທີ່ໃນການປະຕິບັດວຽກງານ ໃນຖານະເປັນປະເທດຜູ້ປະສານງານ ຂອງຕົນໃນທ້າຍປີ 2018. ພ້ອມດຽວກັນນັ້ນ, ປະເທດຊູແອດ ໄດ້ແຈ້ງເຈດຈຳນົງຂອງຕົນ ເພື່ອເປັນຜູ້ປະສານຮ່ວມໃນວຽກງານດັ່ງກ່າວ ຮ່ວມກັບ ສປປ ລາວ ເພື່ອປ່ຽນແທນ ເນເທີແລນ ໃນປີ 2019.




ການເຄື່ອນໄຫວຂອງຄະນະຜູ້ແທນລາວ ໃນກອງປະຊຸມລັດພາຄີສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ເມືອງເຊີແນວ, ປະເທດສະວິດເຊີແລນ.



7.(c) Clearance and destruction
of cluster munitions remnants
and risk reduction education
COORDINATOR
ISU
PRESIDENT
SECRETARY